# ຄວາມສັດຊື່




ເງິນຂອງຂ້ອຍ......ບໍ່ມີຫຍັງເຫຼືອແລ້ວ.
ມື້ນີ້ມີເຫດການ ລັກເຄື່ອງ ຢູ່ທີ່ຕະຫຼາດ.
ໝໍໂຈນນັ້ນຊ່າງມາໂຊກດີແທ້!
ຖ້າເຈົ້າໄດ້ເງິນມາຢ່າງບໍ່ສັດຊື່, ເຈົ້າຈະເອົາບໍ?
ຮູ້ແລ້ວ, ມັນແມ່ນແທ້ບໍ?
ບໍ່ເອົາ! ຂ້ອຍໄດ້ຮຽນຮູ້ຫຼາຍແລ້ວກ່ຽວກັບຄວາມສັດຊື່ຕອນທີ່ເປັນເດັກນ້ອຍມາແລ້ວ.


ຂ້ອຍຮຽນຢູ່ຫ້ອງມໍ 3 ຂ້ອຍນັ່ງໃກ້ກັບທ້າວຊາຍ, ລາວເປັນຄົນທີ່ບໍ່ສັດຊື່ຫຼາຍ.
ເມື່ອສອບເສັງທຸກໆເທື່ອ, ລາວມັກຈະກ່າຍຄຳຕອບຈາກກ້ອງໂຕະຂອງລາວ.
ມື້ໜຶ່ງ, ເມື່ອຊາຍ ຍ່າງຈາກໂຮງຮຽນເມືອບ້ານ, ລາວເຫັນເດັກນ້ອຍຜູ້ໜຶ່ງກຳລັງຫຼິ້ນລົດນ້ອຍທີ່ເປັນຂອງຫຼິ້ນລາຄາແພງຫຼາຍ.
ຂ້ອຍຢາກໄດ້ລົດນັ້ນເດ້!
ຂ້ອຍຈະເອົາເງິນມາແຕ່ໃສເດ້ເນາະ ເພື່ອຊື້ລົດນ້ອຍນັ້ນ.
ແມ່ໄປໃສແລ້ວ? ຂ້ອຍເຫັນກະເປົາລາວຢູ່ນີ້.


ໂອ້ ຄືມີເງິນຫຼາຍແທ້.
ແມ່ຄືຊິບໍ່ຮູ້ດອກ
ຖ້າຂ້ອຍເອົາໄປໜ້ອຍໜຶ່ງ.
ເມື່ອຊາຍ ມີເວລາ, ລາວກໍຂາຍເຂົ້າໜົມ
ເພື່ອຫາເງິນໄວ້ໃຊ້ຈ່າຍ.
ຖ້າຂ້ອຍຂາຍເຂົ້າໜົມໄດ້ໝົດນີ້,
ຂ້ອຍກໍຈະມີເງິນພໍຊື້ລົດນ້ອຍນັ້ນ.
ຊາຍ ມັກຈະຂາຍຂະໜົມຢູ່ທີ່
ສວນສາທາລະນະບ່ອນທີ່
ຄົນມັກໄປຫຼິ້ນ.


ຫຼັງຈາກມື້ນັ້ນມາ, ຊາຍນັ່ງລົງ ແລະ ນັບເງິນທີ່ລາວຫາມາໄດ້.
ໂອ້ ມັນຄືຍັງບໍ່ພໍຢູ່.
ຂ້ອຍຄົງຈະທອນເງິນ ໃຫ້ບາງຄົນຜິດ!
ບໍ່!!!!!!!
ຂ້ອຍໝັ້ນໃຈວ່າ ຄົງບໍ່ມີໃຜດອກຈະສົ່ງເງິນຄືນ.


ມື້ຕໍ່ມາ........
ຊາຍ, ຂ້ອຍຢາກບອກກັບເຈົ້າວ່າ ຕອນເຈົ້າອອກໄປຫຼິ້ນຢູ່ນອກ.
ຕອນເວລາເລີກຫຼິ້ນ.
ຂ້ອຍມີບາງຢ່າງຈະເອົາໃຫ້ເຈົ້າ.
ຂ້ອຍຊື້ເຂົ້າໜົມນຳເຈົ້າມື້ວານນີ້. ຕອນຂ້ອຍເມື່ອເຮືອນຂ້ອຍນຶກຂຶ້ນໄດ້ວ່າເຈົ້າໄດ້ທອນເງິນໃຫ້ຂ້ອຍຫຼາຍແທ້.
THE UNITED STATES OF AMERICA
ONE DOLLAR
ໂອ້ ຂອບໃຈເດີ້!
THE UNITED STATES OF AMERICA
ONE DOLLAR


ເປັນຫຍັງເຈົ້າຈຶ່ງສົ່ງເງິນ ຂ້ອຍຄືນ?
ນີ້ບໍ່ແມ່ນເງິນຂອງຂ້ອຍ. ພຣະເຈົ້າຕ້ອງການໃຫ້ ຂ້ອຍເປັນຄົນສັດຊື່. ສະນັ້ນ, ຂ້ອຍຈຶ່ງເອົາເງິນມາສົ່ງເຈົ້າຄືນ.
ຂ້ອຍບໍ່ເຄີຍພົບກັບຄົນທີ່ ເປັນຄືເຈົ້າເລີຍ.
ຂ້ອຍກໍຄິດວ່າ ຂ້ອຍມີທາງເລືອກຄືກັນ. ຂ້ອຍຄວນຈະເປັນຄົນສັດຊື່ ຫຼື ເອົາເງິນໄປຊື້ລົດນ້ອຍ?
ຊາຍໄດ້ຕັດສິນໃຈເລືອກທີ່ຈະ....
ແມ່,ລູກໄດ້ລັກເງິນຂອງ ແມ່ໃນມື້ກ່ອນ,ແຕ່ລູກຢາກສົ່ງ ແມ່ຄືນ. ລູກຂໍໂທດທີ່ເປັນຄົນ ບໍ່ສັດຊື່.


ຊາຍ ໄດ້ຮຽນຮູ້ຫຍັງຈາກ
ປະສົບການນັ້ນ?
ຊາຍ ບອກຂ້ອຍວ່າແມ່ຂອງ
ລາວດີໃຈຫຼາຍທີ່ລາວໄດ້
ສົ່ງເງິນຄືນ.ແຕ່ວ່າ, ລາວຖືກລົງ
ໂທດບໍ່ໃຫ້ອອກໄປຫຼິ້ນທາງ
ນອກອາທິດໜຶ່ງ.
ພຣະເຈົ້າໄດ້ເອີ້ນພວກເຮົາທຸກຄົນໃຫ້ດຳລົງຊີວິດຢ່າງສັດຊື່. ແລະ
ພຣະອົງຈະອວຍພອນພວກເຮົາແລະ ປະເທດຂອງພວກເຮົາ.
ຖ້າພວກເຮົາພະຍາຍາມເປັນຄົນສັດຊື່, ຄົນອື່ນກໍຈະເຊື່ອໃຈພວກເຮົາ.
ໃຫ້ພວກເຮົາຕັດສິນໃຈເພື່ອເປັນຄົນສັດຊື່.



## ຄຳຖາມສົນທະນາ

1. ຊາຍຮູ້ສຶກແນວໃດ ເມື່ອລາວຮູ້ວ່າລາວຕ້ອງສາລະພາບໃນສິ່ງທີ່ລາວໄດ້ເຮັດຕໍ່ແມ່ຂອງລາວ?
2. ຊາຍ ສາມາດເຮັດຫຍັງເພື່ອຫາເງິນຊື້ລົດນ້ອຍ ຫຼາຍກວ່າທີ່ຈະລັກເງິນແມ່ຂອງລາວ?
3. ເຈົ້າໄດ້ເງິນໄປໂຮງຮຽນແຕ່ລະມື້ເທົ່າໃດ? ເຈົ້າໃຊ້ເງິນນັ້ນແນວໃດ?



## ກິດຈະກຳ

ລອງຄິດເບິ່ງວ່າ ແມ່ຂອງເຈົ້າເອົາເງິນໃຫ້ເຈົ້າເພື່ອຊື້ເຂົ້າໜົມຢູ່ຮ້ານຂາຍເຄື່ອງ. ເຈົ້າຊື້ເຂົ້າໜົມແລ້ວໄດ້ເງິນທອນ. ເມື່ອເຈົ້າເມືອຍເຮືອນ, ເຈົ້າຄິດອອກວ່າແມ່ຄ້າທອນເງິນໃຫ້ເຈົ້າຜິດ.

1. ເຈົ້າຈະເຮັດແນວໃດ? ຈົ່ງສົນທະນາກັບເພື່ອນຂອງເຈົ້າ.

2. ຈົ່ງອະທິຖານນຳກັນ ແລະ ຂໍໃຫ້ພຣະເຈົ້າຊ່ວຍເຈົ້າທີ່ຈະເລືອກເປັນຄົນສັດຊື່ ແລະ ເປັນຄົນທີ່ສາມາດເຊື່ອໃຈໄດ້.

ຕໍ່ມາ ຫລັງຈາກພຣະເຢຊູເຈົ້າໄດ້ເຂົ້າໄປໃນເມືອງເຢຣິໂກ ແລະຜ່ານຕົວເມືອງໄປ.
ຢູ່ທີ່ນັ້ນມີຊາຍຄົນໜຶ່ງຊື່ວ່າ ຊັກຂ່າຍ ລາວເປັນນາຍດ່ານພາສີ ແລະເປັນຄົນຮັ່ງມີ. ຊັກຂ່າຍຢາກຈະ
ເຫັນພຣະເຢຊູເຈົ້າວ່າເປັນຄົນແນວໃດ ແຕ່
ລາວບໍ່ສາມາດເຫັນໄດ້ ເພາະຕົນເປັນຄົນເຕ້ຍ ແລະປະຊາຊົນກໍໜາແໜ້ນ. ດັ່ງນັ້ນ ຊັກຂ່າຍ
ຈຶ່ງແລ່ນລັດໜ້າປະຊາຊົນໄປ ແລະປີນຂຶ້ນຕົ້ນຊຸ
ກະໂມນເພື່ອຈະເຫັນພຣະອົງ ເພາະພຣະອົງກຳລັງຈະສະເດັດຜ່ານໄປທາງນັ້ນ.
ເມື່ອພຣະເຢຊູເຈົ້າມາເຖິງບ່ອນນັ້ນ ພຣະອົງກໍແຫງນໜ້າເບິ່ງຊັກຂ່າຍ ແລະກ່າວແກ່ລາວວ່າ,
"ຊັກຂ່າຍເອີຍ ຮີບລົງມາ ເພາະວັນນີ້ເຮົາຕ້ອງພັກຢູ່ທີ່ເຮືອນຂອງເຈົ້າ." ຝ່າຍຊັກຂ່າຍກໍຟ້າ
ວ ລົງມາ ແລະຕ້ອນຮັບພຣະອົງດ້ວຍຄວາມຊົມຊື່ນຍິນດີ. ເມື່ອປະຊາຊົນທັງໝົດເຫັນດັ່ງນັ້ນ, ແລ້ວ
ຕ່າງກໍເລີ່ມຈົ່ມວ່າ, "ເປນຫຍັງ ທ່ານຜູ້ນີ້ ຈຶ່ງໄປພັກຢູ່ໃນ ເຮືອນຂອງຄົນນອກສິນທຳ." ແລ້ວຊັກ
ຂ່າຍກໍລຸກຂຶ້ນເວົ້າກັບອົງພຣະຜູ້ເປັນເຈົ້າວ່າ, "ພຣະອົງເຈົ້າ ພຣະອົງເຈົ້າເອີຍ, ເບິ່ງແມ! ຂ້ານ້ອຍ
ຂໍມອບເຂົ້າຂອງທີ່ມີຢູ່ ໃຫ້ແກ່ ຄົນຍາກຈົນເຄິ່ງໜຶ່ງ ແລະຖ້າຂ້ານ້ອຍໄດ້ສໍ້ໂກງຜູ້ໃດ ຂ້າ
ນ້ອຍກໍຂໍສົ່ງຄືນໃຫ້ລາວສີ່ເທົ່າ." ພຣະເຢຊູເຈົ້າຊົງກ່າວແກ່ຊັກຂ່າຍວ່ າ, "ໃນວັນນີ້ຄວາ
ມພົ້ນມາເຖິງເຮືອນຫລັງນີ້ແລ້ວ ເພາະຄົນນີ້ເປັນລູກຫລານຂອງອັບຣາຮາມເໝືອນກັນ.
ດ້ວຍວ່າ,ບຸດມະນຸດໄດ້ມາເພື່ອຊອກຫາ ແລະໂຜດເອົາຄົນທີ່ ຫລົງເສຍໄປແລ້ວນັ້ນໃຫ້ລອດພົ້ນ."





www.alongsiders.org
Email: serey@alongsiders.org